ສຳນັກງານ ຄຄຊ
ເລກທີ 0799
ວັນທີ 02 AUG 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຈັດຕັ້ງແລະພະນັກງານ

ເລກທີ 47/ກຈພ
ນະຄອນຫຼວງວຽງຈັນ, ວັນທີ 01 ສິງຫາ 2018

# ແຈ້ງການ

ເຖິງ: ທ່ານ ຫົວໜ້າກົມ-ທຽບເທົ່າ ພາຍໃນ ທະນາຄານແຫ່ງ ສປປ ລາວ.
ທ່ານ ຜູ້ອຳນວຍການທະນາຄານທຸລະກິດລັດ-ລັດຮຸ້ນສ່ວນ.
ເລື່ອງ: ການປັບປຸງການຈັດຕັ້ງຢູ່ທະນາຄານແຫ່ງ ສປປ ລາວ.

- ອີງຕາມພາລະບົດບາດຂອງກົມຈັດຕັ້ງແລະພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 923/ທຫລ ລົງວັນທີ 10/11/2014 ແລະ ອີງຕາມການຕົກລົງເຫັນດີຂອງຂັ້ນເທິງ.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ໃນໄລຍະເດືອນ 4-6/2018, ຢູ່ທະນາຄານແຫ່ງ ສປປ ລາວ ໄດ້ມີການປັບປຸງການຈັດຕັ້ງຂັ້ນຄະນະກົມ ແລະ ຂັ້ນຄະນະພະແນກຈຳນວນໜຶ່ງ. ສະນັ້ນ, ຈຶ່ງແຈ້ງມາຍັງການຈັດຕັ້ງກ່ຽວຂ້ອງຊາບ ຕໍ່ການປັບປຸງການຈັດຕັ້ງດັ່ງກ່າວ, ລາຍລະອຽດດັ່ງນີ້:

**I. ອະນຸມັດໃຫ້ພະນັກງານອອກພັກການ-ຮັບອຸດໜູນບຳນານ:**

1. ອະນຸມັດໃຫ້ທ່ານ ສີວິໄລ ພົມມະຈັກ ຫົວໜ້າກົມເງິນຕາ ອອກພັກການ-ຮັບອຸດໜູນບຳນານ;

2. ອະນຸມັດໃຫ້ທ່ານ ປອ. ແສງຈັນ ສິງສະຫວ່າງ ຮອງຫົວໜ້າສະຖາບັນການທະນາຄານ ອອກພັກການ-ຮັບອຸດໜູນບຳນານ.

**II. ແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ ແລະ ສັບປ່ຽນໜ້າທີ່ບ່ອນປະຈຳການພະນັກງານຂັ້ນຄະນະກົມ, ຄະນະພະແນກ:**

- ກົມເງິນຕາ:

1. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ ບຸນວົງ ດວງດອກເກດ ຫົວໜ້າສາຂາ ທຫລ ພາກກາງ ແຂວງສະຫວັນນະເຂດ ເປັນຫົວໜ້າກົມເງິນຕາ;

2. ແຕ່ງຕັ້ງທ່ານ ຖາວອນ ເຂັມຄຳ ຮອງຜູ້ອຳນວຍການໃຫຍ່ທະນາຄານສົ່ງເສີມກະສິກຳ ເປັນຮອງຫົວໜ້າກົມເງິນຕາ.

- ກົມຄຸ້ມຄອງສະຖາບັນການເງິນ:

1. ຍົກຍ້າຍທ່ານ ປອ. ອາດົມ ປະເສີດ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ, ທຫລ ໄປຮັບໜ້າທີ່ໃໝ່ເປັນຜູ້ອຳນວຍການໃຫຍ່ທະນາຄານພັດທະນາລາວ;

2. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ ອາລຸນ ບຸນຍົງ ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຫຼວງພະບາງ ເປັນຫົວໜ້າກົມຄຸ້ມຄອງສະຖາບັນການເງິນ.

- <u>ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້:</u>

1. ແຕ່ງຕັ້ງທ່ານ **ບົວລຽນ ພົມມະວົງສາ** ຜູ້ອຳນວຍການໃຫຍ່ທະນາຄານພັດທະນາລາວ ເປັນຫົວໜ້າສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້;

2. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ນ. ອ່ອນຈັນ ໄຊຄຳເພັງ** ຮັກສາການຫົວໜ້າສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ເປັນຮອງຫົວໜ້າກົມພົວພັນສາກົນ.

- <u>ກົມເຕັກໂນໂລຊີຂໍ້ມູນຂ່າວສານ:</u>

1. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ນ. ຄູນດີ ຈັນທະຈັກ** ຮອງຫົວໜ້າກົມພົວພັນສາກົນ ເປັນຮອງຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ.

- <u>ກົມກວດກາພາຍໃນ:</u>

1. ແຕ່ງຕັ້ງທ່ານ **ວຽງວັນທອງ ເທບສົມພູ** ຮອງຫົວໜ້າພະແນກກວດກາຄວາມໝັ້ນຄົງ ແລະ ປອດໄພຂອງຊັບສິນ ເປັນວ່າການຫົວໜ້າພະແນກກວດກາຄວາມໝັ້ນຄົງ ແລະ ປອດໄພຂອງຊັບສິນ, ກົມກວດກາພາຍໃນ.

- <u>ກົມຈັດຕັ້ງແລະພະນັກງານ:</u>

1. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ວຽງຄຳ ແກ້ວສິດໃສ** ຮອງຫົວໜ້າພະແນກພັກແລະອົງການຈັດຕັ້ງມະຫາຊົນ, ກົມຈັດຕັ້ງແລະພະນັກງານ ເປັນຮອງຫົວໜ້າພະແນກສິນເຊື່ອ, ກົມບໍລິການທະນາຄານ;

2. ແຕ່ງຕັ້ງທ່ານ **ກົມພອນ ກົງພາສິດ** ວິຊາການພະແນກພັດທະນາພະນັກງານ ເປັນຮອງຫົວໜ້າພະແນກພັດທະນາພະນັກງານ, ກົມຈັດຕັ້ງແລະພະນັກງານ;

3. ແຕ່ງຕັ້ງທ່ານ **ວັນນະຄອນ ສຸວັນນະລັງສີ** ວິຊາການພະແນກພັກແລະອົງການຈັດຕັ້ງມະຫາຊົນ ເປັນຮອງຫົວໜ້າພະແນກພັກແລະອົງການຈັດຕັ້ງມະຫາຊົນ, ກົມຈັດຕັ້ງແລະພະນັກງານ.

- <u>ກົມບັນຊີແລະການເງິນ:</u>

1. ແຕ່ງຕັ້ງທ່ານ **ຄອນສະຫວັນ ອຸດົມສຸກ** ວິຊາການພະແນກຄົ້ນຄວ້າການບັນຊີ ເປັນຮອງຫົວໜ້າພະແນກຄົ້ນຄວ້າການບັນຊີ, ກົມບັນຊີແລະການເງິນ.

- <u>ສາຂາ ທຫລ ພາກເໜືອ ແຂວງຫຼວງພະບາງ:</u>

1. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ວຽງສະຫວັນ ໄຊຍະວົງ** ຮັກສາການຫົວໜ້າສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ ເປັນຫົວໜ້າສາຂາ ທຫລ ພາກເໜືອ ແຂວງຫຼວງພະບາງ;

2. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ນ. ຄຳຫຼ້າ ເຮືອນມະນີວົງ** ຫົວໜ້າພະແນກກວດກາທະນາຄານທຸລະກິດ, ກົມຄຸ້ມຄອງທະນາຄານທຸລະກິດ ເປັນຮອງຫົວໜ້າສາຂາ ທຫລ ພາກເໜືອ ແຂວງຫຼວງພະບາງ.

- <u>ສາຂາ ທຫລ ພາກເໜືອ ແຂວງອຸດົມໄຊ:</u>

1. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ແອ ສ້ອຍສຸວັນ** ຫົວໜ້າພະແນກຄຸ້ມຄອງສະຖາບັນການເງິນ ເປັນຫົວໜ້າພະແນກກວດກາພາຍໃນ;

2. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ສີສະເກດ ສີລາວົງສາ** ຫົວໜ້າພະແນກຫ້ອງການ-ຈັດຕັ້ງ ເປັນຫົວໜ້າພະແນກຄຸ້ມຄອງທະນາຄານທຸລະກິດ;

3. ສັບຊ້ອນ ແລະ ແຕ່ງຕັ້ງທ່ານ **ລັດຕະນາ ເຮີປັດໄຈ** ຫົວໜ້າພະແນກ ທີ່ສຳເລັດການຮຽນທິດສະດີການເມືອງ ແລະ ການປົກຄອງ ເປັນຫົວໜ້າພະແນກສາງ-ຄັງເງິນສົດ;

4. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ທອງດຳ ວົງລໍຄຳ** ຮອງຫົວໜ້າພະແນກຄຸ້ມຄອງທະນາຄານທຸລະກິດ ເປັນຮອງຫົວໜ້າພະແນກຄຸ້ມຄອງສະຖາບັນການເງິນ;

5. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ແສງສະຫວັນ ມະນີເລີດ** ຮອງຫົວໜ້າພະແນກສາງ-ຄັງເງິນສົດ ເປັນຮອງຫົວໜ້າພະແນກຫ້ອງການ-ຈັດຕັ້ງ;

6. ແຕ່ງຕັ້ງທ່ານ **ສິນລິດ ຫຼວງພະຈິດ** ວິຊາການພະແນກສາງ-ຄັງເງິນສົດ ເປັນຮອງຫົວໜ້າພະແນກສາງ-ຄັງເງິນສົດ.

- **<u>ສາຂາ ທຫລ ພາກກາງ ແຂວງສະຫວັນນະເຂດ:</u>**

1. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ວົງພະຈັນ ແສງສຸວັນ** ຮອງຫົວໜ້າສະຖາບັນການທະນາຄານ ເປັນອຳນວຍການຫົວໜ້າສາຂາ ທຫລ ພາກກາງ ແຂວງສະຫວັນນະເຂດ;

2. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ສົມເພັດ ວົງຄຳຈັນ** ຫົວໜ້າພະແນກສິນເຊື່ອ, ກົມບໍລິການທະນາຄານ ເປັນຮອງຫົວໜ້າສາຂາ ທຫລ ພາກກາງ ແຂວງສະຫວັນນະເຂດ.

- **<u>ສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ:</u>**

1. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ນອນຕາ ແກ້ວມະນີ** ຮອງຫົວໜ້າກົມບັນຊີແລະການເງິນ ເປັນອຳນວຍການຫົວໜ້າສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ເປັນບ່ອນອີງໃນການພົວພັນປະສານງານໃນວຽກງານທີ່ຕິດພັນດ້ວຍ.

**ຫົວໜ້າກົມ**

ທະນາຄານແຫ່ງ ສ. ປ. ປ. ລາວ ★ ກົມຈັດຕັ້ງແລະພະນັກງານ

**ພານຸສັກ ແກ່ນວົງພະຈັນ**